ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເຈົ້າແຂວງ

ດ່ວນທີ່ສຸດ

ເລກທີ.343.../ຈຂ.ອຊ

ອຸດົມໄຊ, ວັນທີ 25.. ເມສາ 2021

# ຄຳສັ່ງເພີ່ມເຕີມ
## ວ່າດ້ວຍການ ເພີ່ມທະວີມາດຕະການ ສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19

ເຖິງ: - ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ;
- ເຈົ້າເມືອງ ແລະ ນາຍບ້ານ ທົ່ວແຂວງອຸດົມໄຊ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ແຂວງອຸດົມໄຊ.

- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ຄຳສັ່ງເຈົ້າແຂວງອຸດົມໄຊ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021. ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ຜົນຂອງກອງປະຊຸມຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຂັ້ນແຂວງ ຄັ້ງວັນທີ 25 ເມສາ 2021.

ສະພາບການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ໃນໂລກ ແລະ ພາກພື້ນ ຍັງມີຜູ້ຕິດເຊື້ອ ແລະເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ. ສຳລັບຢູ່ ສປປ ລາວ ໃນຊ່ວງຫລັງປີໃໝ່ລາວມານີ້ ແມ່ນກວດພົບຜູ້ຕິດເຊື້ອໃນຊຸມຊົນເພີ່ມຂຶ້ນຢ່າງໄວວາ ແລະ ມີການແຜ່ຂະຫຍາຍໄປຫຼາຍແຂວງໃນທົ່ວປະເທດ. ຕໍ່ກັບສະພາບການດັ່ງກ່າວນີ້ ຄະນະສະເພາະກິດແຂວງອຸດົມໄຊ ຈຶ່ງມີຄວາມຈຳເປັນເພີ່ມມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂການລະບາດຂອງພະຍາດໂຄວິດ-19 ດັ່ງນີ້:

1. ໃຫ້ສືບຕໍ່ປະຕິບັດຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ຄຳສັ່ງເຈົ້າແຂວງ ແຂວງອຸດົມໄຊ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021 ຢ່າງເຂັ້ມງວດ.

2. ໃຫ້ໂຈະການຮຽນ-ການສອນຊົ່ວຄາວຂອງ ສະຖາບັນການສຶກສາທຸກຂັ້ນ, ທຸກລະບົບ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວແຂວງອຸດົມໄຊ (ສຳລັບສະຖາບັນການສຶກສາທີ່ມີນັກສຶກສາມາຈາກຕ່າງເມືອງ ແລະ ຕ່າງແຂວງ ແມ່ນບໍ່ອະນຸຍາດໃຫ້ເດີນທາງກັບ); ໃຫ້ໂຈະການຫຼິ້ນກິລາທຸກປະເພດ ທີ່ມີການພົວພັນກັບຄົນຈຳນວນຫຼາຍ ເຊັ່ນ: ບານເຕະ, ບານສົ່ງ, ກະຕໍ້ຫວາຍ, ສະນຸກເກີ, ຕີບູນ ແລະ ອື່ນໆ.

สแกนด้วย CamScanner

3. ຫ້າມຄົນຢູ່ແຂວງອຸດົມໄຊ ເດີນທາງໄປຕ່າງແຂວງ, ຫ້າມຄົນຕ່າງແຂວງ ເດີນທາງເຂົ້າແຂວງອຸດົມໄຊ ແລະ ຫ້າມເດີນທາງ ລະຫວ່າງເມືອງ ຕໍ່ ເມືອງ ຂອງແຂວງອຸດົມໄຊ. ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ. ໃຫ້ໂຈະການບໍລິການຂົນສົ່ງໂດຍສານສາທາລະນະ ລະຫວ່າງ ເມືອງ ຕໍ່ເມືອງ ພາຍໃນແຂວງອຸດົມໄຊ.

4. ຫ້າມໂຄສະນາ, ເຜີຍແຜ່ ແລະ ສົ່ງຕໍ່ຂໍ້ມູນຂ່າວສານ ທີ່ບໍ່ມີຄວາມຈິງ ໃນຮູບແບບໃດໜຶ່ງ ຜ່ານສື່ຕ່າງໆ ເຊິ່ງເຮັດໃຫ້ມີຄວາມເຂົ້າໃຈຜິດ, ສ້າງຄວາມແຕກຕື່ນ ແລະ ສົ່ງຜົນກະທົບໃນທາງລົບຕໍ່ສັງຄົມ ຖ້າລະເມີດຈະຖືກ ດຳເນີນຄະດີຕາມກົດໝາຍ.

5. ຫ້າມພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ນັກບວດ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດໃນແຂວງອຸດົມໄຊ ອອກຈາກເຮືອນ/ທີ່ພັກອາໄສ ແຕ່ເວລາ 21:30 ໂມງຕອນຄ່ຳ ຫາ 06:00 ໂມງຕອນເຊົ້າ ຍົກເວັ້ນກໍລະນີທີ່ຈຳເປັນ ເຊັ່ນ: ກໍລະນີເຈັບເປັນ ແລະ ເຈົ້າໜ້າທີ່ ທີ່ປະຕິບັດວຽກງານຕາມການມອບໝາຍ.

6. ໃຫ້ບັນດາພະນັກງານ, ລັດຖະກອນຂອງພະແນກການ, ກົມກອງອ້ອມຂ້າງແຂວງ, ລັດວິສາຫະກິດ-ເອກະຊົນ ແລະ ບັນດາບໍລິສັດ ໃນທົ່ວແຂວງອຸດົມໄຊ ປະຈຳການ ແລະ ເຮັດວຽກຕາມປົກກະຕິ, ຍົກເວັ້ນ ແມ່ຍິງຖືພາເດືອນຄອງ, ແມ່ລູກອ່ອນທີ່ຢູ່ໃນຊ່ວງໄລຍະໃຫ້ນົມລູກ ແມ່ນໃຫ້ພັກຜ່ອນຢູ່ເຮືອນ, ຖ້າພະແນກການ, ກົມກອງໃດ ມີຈຳນວນຄົນຫຼາຍ, ແອອັດ ແມ່ນໃຫ້ພັດປ່ຽນກັນໄປປະຈຳການຢູ່ຫ້ອງການ ແລະ ເຮັດວຽກຢູ່ເຮືອນ.

7. ໃຫ້ຢຸດຕິການບິນທະບາດຕາມເສັ້ນທາງ, ໃຫ້ການຈັດຕັ້ງບ້ານຈັດແບ່ງຝຽນກັນສົ່ງ ຈັງຫັນ, ເພນ ໃນຮູບແບບທີ່ເໝາະສົມ ແລະ ໃຫ້ປະຕິບັດມາດຕະການປ້ອງກັນໂຄວິດ-19 ຢ່າງເຂັ້ມງວດ ເປັນຕົ້ນແມ່ນ ບໍ່ໃຫ້ເຕົ້າໂຮມຄົນເກີນ 20 ຄົນ, ໃສ່ຜ້າປິດປາກ-ດັງ, ໝັ່ນລ້າງມືໃສ່ສະບູ ຫຼື ເຈວລ້າງມື.

8. ໃຫ້ຄະນະສະເພາະກິດຂັ້ນແຂວງ ສົມທົບເຈົ້າໜ້າທີ່ ປກຊ-ປກສ ຕັ້ງຈຸດກວດກາຄົນເຂົ້າອອກແຂວງ ໃນແຕ່ລະຈຸດເຊື່ອມຕໍ່ແຂວງຕໍ່ແຂວງຢ່າງເຂັ້ມງວດ ແລະ ມອບໃຫ້ເຈົ້າເມືອງ 7 ເມືອງ ເປັນເຈົ້າການ ຈັດຕັ້ງຈຸດກວດຄົນເຂົ້າ-ອອກ ເມືອງຂອງຕົນ ຢ່າງເຂັ້ມງວດ ແລະ ພ້ອມກັນເຜີຍແຜ່, ແນະນຳໃຫ້ອົງການປົກຄອງບ້ານຮັບຮູ້ຢ່າງທົ່ວເຖິງ.

9. ມອບໃຫ້ ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ ສົມທົບກັບກອງບັນຊາການ 7 ເມືອງ ເພີ່ມທະວີການກວດກາຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນໄປ-ມາ, ການລະເມີດຂອງຮ້ານກິນດື່ມ, ຮ້ານບັນເທີງ ແລະ ກິດຈະກຳທີ່ເກືອດຫ້າມ ໂດຍຈັດຕັ້ງໜ່ວຍງານສະເພາະກິດເຄື່ອນທີ່ລາດຕະເວນ, ຕິດຕາມ ແລະ ປ້ອງກັນເວນຍາມຕາມຈຸດຕ່າງໆ ໃຫ້ເຂັ້ມງວດ.

10. ໃຫ້ຄະນະສະເພາະກິດຂັ້ນແຂວງ ແລະ ຂັ້ນເມືອງ ເພີ່ມທະວີການປະສານງານ ແລະປະຕິບັດວຽກງານຕາມການແບ່ງຂັ້ນຄຸ້ມຄອງ ໃຫ້ເໝາະສົມ ແລະ ວ່ອງໄວ.

11. ໃນການຈັດຕັ້ງປະຕິບັດຕົວຈິງຖ້າມີຄວາມຈຳເປັນກໍ່ມອບໃຫ້ຄະນະສະເພາະກິດຂັ້ນແຂວງ, ຂັ້ນເມືອງ ອອກນິຕິກຳແນະນຳການຈັດຕັ້ງປະຕິບັດເປັນອັນລະອຽດ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ.

12. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດແຕ່ເວລາ 06:00 ໂມງເຊົ້າ ຂອງວັນທີ 26 ເມສາ 2021 ເຖິງ ເວລາ 17:00 ຂອງວັນທີ 05 ພຶດສະພາ 2021. ກໍລະນີມີການປ່ຽນແປງ ຈະແຈ້ງໃຫ້ຊາບຕື່ມເປັນແຕ່ລະໄລຍະ.

ຮອງ ເຈົ້າແຂວງອຸດົມໄຊ

ບຸນຄົງ ຫຼ້າຈຽມພອນ

ບ່ອນສົ່ງ:

- ຄະນະສະເພາະກິດຂັ້ນແຂວງ.
- ຄະນະສະເພາະກິດຂັ້ນເມືອງ.
- ພະແນກການ, ກົມກອງອ້ອມຂ້າງແຂວງ.
- ອົງການຈັດຕັ້ງຕ່າງໆທົ່ວແຂວງ.
- ສຳເນົາ.

สแกนด้วย CamScanner